ພິທີເຊັນບົດບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງ JDB ແລະ ບໍລິສັດ APDL ວ່າດ້ວຍການສະໜອງທຶນ ສຳລັບໂຄງການພະລັງງານແສງຕາເວັນ







ໃນຕອນບ່າຍວັນທີ 14 ກັນຍາ 2026 ທີ່ສຳນັກງານໃຫຍ່ ທະນາຄານຮ່ວມພັດທະນາ ມະຫາຊົນ ນະຄອນຫຼວງວຽງຈັນ. ໄດ້ມີພິທີເຊັນບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ທະນາຄານຮ່ວມພັດທະນາມະຫາຊົນ JDB ແລະ ບໍລິສັດ APDL . ພາຍໃຕ້ການເປັນປະທານ ຂອງ ທ່ານ ສູນທອນ ຈັນທະວົງ ປະທານສະພາຜູ້ບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ, ທ່ານ ກຳພົນ ສ່ວງບຸລະມະກຸນ ປະທານເຈົ້າໜ້າທີ່ບໍລິຫານ ບໍລິສັດ ອາວຟ່າ ດີວີຊັ່ນ ຈຳກັດ ມະຫາຊົນ ພ້ອມດ້ວຍຄະນະຜູ້ບໍລິຫານລະດັບສູງ ທັງສອງຝ່າຍເຂົ້າຮ່ວມ ເປັນສັກຂີພະຍານ.

ໃນພິທີຮ່ວມລົງນາມໂດຍ ທ່ານ ນ. ຄອນສະຫວັນ ວິຊາເທບ ຜູ້ອຳນວຍການ ທະນາຄານຮ່ວມພັດທະນາ ມະຫາຊົນ ແລະ ທ່ານ ເພັ່ງຊົ່ງ ຕົ່ງນາມມະວົງ ຜູ້ຈັດການ ບໍລິສັດ ອາວຟ່າພາວເວີ ດີວີລົບເມັ້ນລາວ ຈຳກັດຜູ້ດຽວ.
ຈຸດປະສົງຂອງການຮ່ວມມືໃນຄັ້ງນີ້ ແມ່ນເພື່ອສ້າງພັນທະມິດທາງດ້ານການເງິນ ໃນການສະໜັບສະໜູນ ແລະ ສະໜອງທຶນໃຫ້ແກ່ການພັດທະນາໂຄງການພະລັງງານແສງຕາເວັນເຊິ່ງເປັນພະລັງງານສະອາດ ແລະ ເປັນມິດຕໍ່ສິ່ງແວດລ້ອມ. ການຮ່ວມມືດັ່ງກ່າວ ບໍ່ພຽງແຕ່ເປັນການສົ່ງເສີມການນຳໃຊ້ພະລັງງານທົດແທນຢູ່ພາຍໃນປະເທດເທົ່ານັ້ນ ແຕ່ຍັງເປັນກ້າວສຳຄັນໃນການວາງຮາກຖານເພື່ອສ້າງອະນາຄົດທີ່ຍືນຍົງ ດ້ານພະລັງງານ ແລະ ເສດຖະກິດ-ສັງຄົມ ຂອງປະເທດຊາດ.

ພິທີເຊັນບົດບັນທຶກຄວາມເຂົ້າໃຈ ໄດ້ດຳເນີນໄປຢ່າງເປັນທາງການ, ອົບອຸ່ນ ແລະ ຈົບລົງດ້ວຍຜົນສຳເລັດຢ່າງງົດງາມ, ເຊິ່ງຖືເປັນນິມິດໝາຍອັນດີ ໃນການຮ່ວມມືລະຫວ່າງທຸລະກິດພະລັງງານ ແລະ ທະນາຄານຮ່ວມພັດທະນາ ມະຫາຊົນ ເພື່ອຂັບເຄື່ອນການພັດທະນາ ແບບຍືນຍົງໃນອະນາຄົດ ແລະ ເພື່ອສ້າງຜົນປະໂຫຍດສູງສຸດໃຫ້ກັບທຸກຝ່າຍ ເປັນສ່ວນສຳຄັນໃນການພັດທະນາປະເທດຊາດໃຫ້ຈະເລີນຮຸ່ງເຮືອງ. ທະນາຄານຮ່ວມພັດທະນາ ມະຫາຊົນ **ເຕີບໃຫຍ່ໄປພ້ອມກັນ**.

